ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຄໍາມ່ວນ

ເລກທີ 58.../ຈຂ

ຄໍາມ່ວນ, ວັນທີ 20 ຕຸລາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຈັດການແຂ່ງຂັນກິລາທົ່ວແຂວງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ່ 75 /ສພຊ, ລົງວັນທີ 20 ມິນາ 2025;
- ອີງຕາມ ມາດຕາ 56 ຫາ ມາດຕາ 62 ກົດໝາຍວ່າດ້ວຍກິລາ-ກາຍຍະກໍາ (ສະບັບປັບປຸງ) ເລກທີ 74/ສພຊ ລົງວັນທີ 25 ພະຈິກ 2019;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບປັບປຸງ ເລກທີ 06 /ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງ ຮັບຮອງເອົາຂໍ້ຕົກລົງ ວ່າດ້ວຍການແຂ່ງຂັນກິລາທົ່ວແຂວງຄໍາມ່ວນ ສະບັບເລກທີ 38/ສພຂ.ຄມ, ລົງວັນທີ 28 ສິງຫາ 2025.

## ເຈົ້າແຂວງຄໍາມ່ວນ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະຖານ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານການແຂ່ງຂັນກິລາ ພາຍໃນແຂວງ ເພື່ອໃຫ້ວຽກງານດັ່ງກ່າວມີຄຸນນະພາບ, ເສີມສ້າງບັນຍາກາດໃຫ້ຟົດຟື້ນ, ຊຸກຍູ້ສົ່ງເສີມທຸກເພດທຸກໄວ, ປະຊາຊົນບັນດາເຜົ່າ ພາຍໃນແຂວງ ມີສຸຂະພາບແຂງແຮງ ທາງດ້ານຮ່າງກາຍຈິດໃຈ, ມີນໍ້າໃຈນັກກິລາ, ເຄົາລົບກົດລະບຽບ, ກະຕິກາ, ແນໃສ່ພັດທະນາຊັບພະຍາກອນມະນຸດ, ສົ່ງເສີມດ້ານພອນສະຫວັນ, ຍົກສູງຖານະບົດບາດກຽດສັກສີຂອງແຂວງ ເລືອກໄດ້ຄົນເກັ່ງ, ຄົນເດັ່ນ ເພື່ອເປັນຕົວແທນນັກກິລາຂອງແຂວງ ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ, ທັງເປັນການສົ່ງເສີມການທ່ອງທ່ຽວ ແລະ ພັດທະນາເສດຖະກິດສັງຄົມພາຍໃນແຂວງ.

### ມາດຕາ 2 ການຈັດການແຂ່ງຂັນກິລາທົ່ວແຂວງ

ການຈັດການແຂ່ງຂັນກິລາທົ່ວແຂວງ ແມ່ນງານມະຫາກໍາ ດ້ານການກິລາພາຍໃນແຂວງ ທີ່ປະກອບດ້ວຍການແຂ່ງຂັນກິລາປະເພດຕ່າງໆ ລະຫວ່າງບັນດາເມືອງດ້ວຍກັນ, ເພື່ອເປັນການເສີມຂະຫຍາຍວຽກງານກິລາເຂົ້າສູ່ມວນຊົນຢ່າງກວ້າງຂວາງ ຍົກສູງສະມັດຕະພາບຮ່າງກາຍ ແລະ ມານະຈິດຂອງຊາວໜຸ່ມ, ນັກຮຽນ, ນັກສຶກສາ, ປັນຍາຊົນ ເພື່ອຫ່າງໄກຈາກສິ່ງເສບຕິດ ທັງເປັນການຍົກລະດັບທາງເຕັກນິກ, ຍຸດທະວິທີໃນການຫຼິ້ນກິລາໃຫ້ນັບມື້ເຂັ້ມແຂງ.

ມາດຕາ 3 ອະທິບາຍຄຳສັບ

1. ການຈັດການແຂ່ງຂັນກິລາທົ່ວແຂວງໝາຍເຖິງ ຂະບວນແຂ່ງຂັນກິລາປະເພດຕ່າງໆ ຂອງບັນດາເມືອງພາຍໃນແຂວງ;

2. ກຳມະການຕັດສິນ ໝາຍເຖິງ ຜູ້ຄວບຄຸມການແຂ່ງຂັນໃຫ້ເປັນໄປຕາມກົດລະບຽບ ແລະ ກະຕິກາຢ່າງຖືກຕ້ອງ;

3. ນັກກິລາໝາຍເຖິງ ຜູ້ທີ່ຫຼິ້ນກິລາ, ເຂົ້າຮ່ວມຝຶກແອບ, ຝຶກຊ້ອມ, ການສະແດງ ແລະ ແຂ່ງຂັນກິລາປະເພດໃດໜຶ່ງ;

4. ຄູຝຶກກິລາໝາຍເຖິງ ຜູ້ທີ່ມີວິຊາສະເພາະ, ມີປະສົບການ, ຄວາມຊຳນານ ແລະ ເປັນຜູ້ແນະນຳ, ຝຶກສອນວິຊາກິລາປະເພດໃດໜຶ່ງ ໃຫ້ແກ່ນັກກິລາ;

5. ກະຕິກາ, ລະບຽບການໝາຍເຖິງ ຂໍ້ກຳນົດຂອງປະເພດກິລາໃດໜຶ່ງ ວາງອອກຕາມປະເພດກິລາທີ່ມີຄວາມເອກະພາບ ເພື່ອເປັນບ່ອນອີງ ໃນການແຂ່ງຂັນຢ່າງຍຸຕິທຳ;

6. ຫຼຽນລາງວັນໝາຍເຖິງ ການຢັ້ງຢືນຜົນສຳເລັດຂອງການແຂ່ງຂັນແຕ່ລະປະເພດກິລາຕາມລຳດັບເຊັ່ນ: ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ;

7. ສັດນຳໂຊກ ໝາຍເຖິງ ເຄື່ອງໝາຍສັນຍາລັກທາງດ້ານວັດທະນະທຳ-ສັງຄົມ ທີ່ໄດ້ຮັບຮອງ ແລະ ອະນຸຍາດຈາກຄະນະກຳມະການຈັດການແຂ່ງຂັນ.

ມາດຕາ 4 ນະໂຍບາຍຂອງລັດ

ລັດຊຸກຍູ້, ສົ່ງເສີມທາງດ້ານບຸກຄະລະກອນ, ສະໜອງວັດຖຸອຸປະກອນ ແລະ ງົບປະມານ ເຂົ້າໃນວຽກງານກິລາ-ກາຍຍະກຳ. ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາກລັດ, ເອກະຊົນ ພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາກິລາ-ກາຍຍະກຳ ດ້ວຍນະໂຍບາຍຕ່າງໆ;

ລັດຖືເອົາວຽກງານກິລາ-ກາຍຍະກຳເປັນວຽກງານໜຶ່ງທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດ ທາງດ້ານສຸຂະພາບຮ່າງກາຍ ແລະ ຈິດໃຈ, ສ້າງໃຫ້ຄົນເຮົາເປັນຜູ້ມີຄວາມອົດທົນ, ເຂັ້ມແຂງ, ມີຄວາມເສຍສະຫຼະ, ມີລະບຽບວິໄນ, ມີນ້ຳໃຈຮັກຊາດ ເຮັດໃຫ້ສັງຄົມມີຊີວິດຊີວາ, ມີບັນຍາກາດເບີກບານມ່ວນຊື່ນ ແລະ ປະກອບສ່ວນໃນການພັດທະນາທາງດ້ານເສດຖະກິດສັງຄົມ.

ມາດຕາ 5 ຫຼັກການຈັດການແຂ່ງຂັນກິລາທົ່ວແຂວງ

1. ຮັບປະກັນຄວາມສອດຄ່ອງທາງດ້ານລະບຽບການ ກົດໝາຍ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

2. ຮັບປະກັນຄວາມເປັນເອກະພາບທາງກົດລະບຽບ, ກະຕິກາ, ໂປ່ງໃສ, ຍຸຕິທຳ, ມີຄວາມປອດໄພ, ມີຄວາມສາມັກຄີ, ມີດຕະພາບ, ມີນ້ຳໃຈນັກກິລາ, ມີຄວາມອົດທົນ, ເສຍສະຫຼະ ແລະ ມີສະຕິປົກປ້ອງກຽດສັກສີຂອງນັກກິລາ;

3. ບັນດາເມືອງ ແລະ ອົງການຈັດຕັ້ງຕ່າງໆ ໄດ້ຖອດຖອນບົດຮຽນເຊິ່ງກັນ ແລະ ກັນ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວວຽກງານກິລາໃນຂອບເຂດທົ່ວແຂວງ ຄຳມ່ວນ.

## ໝວດທີ 2
## ການຈັດການແຂ່ງຂັນກິລາທົ່ວແຂວງ

**ມາດຕາ 7 ສະຖານທີ່ ແລະ ໄລຍະເວລາ**

ສະຖານທີ່ແຂ່ງຂັນ ແມ່ນ ການກຳນົດບ່ອນຈັດການແຂ່ງຂັນໂດຍຜັດປ່ຽນແຕ່ລະເມືອງເປັນເຈົ້າພາບ ໂດຍອີງໃສ່ເງື່ອນໄຂ ແລະ ຄວາມພ້ອມຂອງແຕ່ລະເມືອງ, ການຈັດການແຂ່ງຂັນກິລາທົ່ວແຂວງ ແມ່ນຈະໄດ້ຈັດຂຶ້ນ 2 ປີ ຕໍ່ 1 ຄັ້ງ.

**ມາດຕາ 8 ຄະນະຮັບຜິດຊອບ**

ຄະນະຮັບຜິດຊອບຊີ້ນຳລວມ:

1. ຮອງ ປະທານຄະນະກຳມະການປົກຄອງແຂວງ ປະທານສະມາຄົມກິລາ-ກາຍຍະກຳແຂວງ ເປັນປະທານ
2. ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ເປັນຮອງ
3. ປະທານຄະນະກຳມະການປົກຄອງເມືອງ ທີ່ເປັນເຈົ້າພາບ ເປັນຮອງ
4. ຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ ເປັນຄະນະ
5. ຄະນະພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ
6. ຮອງ ປະທານຄະນະກຳມະການປົກຄອງເມືອງ 9 ຕົວເມືອງ ເປັນຄະນະ
7. ປະທານສະຫະພັນກິລາປະເພດຕ່າງໆ ເປັນຄະນະ
8. ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ 10 ຕົວເມືອງ ເປັນຄະນະ

ຄະນະກຳມະການຝ່າຍຕ່າງໆ ປະກອບມີ:

1. ກຳມະການ ກອງເລຂາ ແລະ ບໍລິຫານ, ຍ້ອງຍໍ;
2. ກຳມະການ ເຕັກນິກ - ຈັດການແຂ່ງຂັນ;
3. ກຳມະການ ພິທີເປີດ - ປິດ;
4. ກຳມະການ ພິທີການຕ້ອນຮັບ, ທີ່ພັກ ແລະ ສະຖານທີ່ແຂ່ງຂັນ;
5. ກຳມະການ ໂຄສະນາປະຊາສຳພັນ ແລະ ຂໍ້ມູນຂ່າວສານ;
6. ກຳມະການ ເສດຖະກິດ ແລະ ລະດົມທຶນ;
7. ກຳມະການ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;
8. ກຳມະການ ການແພດ ແລະ ສຸຂະພາບ.

**ມາດຕາ 9 ເຄື່ອງໝາຍ**

ການຈັດການແຂ່ງກິລາແຕ່ລະຄັ້ງ ຕ້ອງໄດ້ກຳນົດເອົາເຄື່ອງໝາຍສັນຍາລັກ ແລະ ສັດນຳໂຊກເຊິ່ງໄດ້ຮັບຮອງ ແລະ ອະນຸມັດນຳໃຊ້ຈາກຄະນະປະທານຈັດການແຂ່ງຂັນ.

**ມາດຕາ 10 ປະເພດກິລາ**

ການແຂ່ງຂັນກິລາແຕ່ລະຄັ້ງ ຕ້ອງໄດ້ກຳນົດຈຳນວນປະເພດກິລາ ບໍ່ໃຫ້ຫຼຸດ 5 ປະເພດ ໃນນັ້ນຕ້ອງໃຫ້ມີປະເພດກິລາແລ່ນ-ລານ ທຸກຄັ້ງ;

ແຕ່ລະເມືອງ ສົ່ງນັກກິລາເຂົ້າຮ່ວມຢ່າງໜ້ອຍບໍ່ໃຫ້ຫຼຸດ 3 ປະເພດກິລາ ໃນນັ້ນຕ້ອງໃຫ້ມີປະເພດກິລາແລ່ນ-ລານ ເຂົ້າຮ່ວມ.

**ມາດຕາ 11 ມາດຕະຖານ ແລະ ເງື່ອນໄຂຂອງນັກກິລາ**

1. ຕ້ອງເປັນຄົນທີ່ມີສຸຂະພາບແຂງແຮງ;
2. ເປັນຄົນສັນຊາດລາວທີ່ຕັ້ງພູມລຳເນົາຢູ່ແຂວງຄຳມ່ວນ, ໂດຍອີງໃສ່ສຳມະໂນຄົວ ຫຼືບັດປະຈຳຕົວ;

3. ເປັນນັກກິລາທີ່ບໍ່ຖືກລົງໂທດ, ບໍ່ໄດ້ຖືກພັກການແຂ່ງຂັນຈາກຄະນະຮັບຜິດຊອບຈັດງານແຂ່ງຂັນກິລາຄັ້ງຜ່ານມາ ສຳລັບຜູ້ທີ່ຖືກລົງໂທດ ແລະ ຖືກພັກການແຂ່ງຂັນ ຖ້າຫາກຜູ້ກ່ຽວໝົດກຳນົດໂທດແລ້ວ ກໍ່ມີສິດເຂົ້າຮ່ວມງານແຂ່ງຂັນຕາມລະບຽບການທີ່ກຳນົດໄວ້;

4. ນັກກິລາທີມຊາດລາວອະນຸຍາດໃຫ້ເຂົ້າຮ່ວມແຂ່ງຂັນ ໄດ້ປະເພດ 1 ບໍ່ເກີນ 2 ຄົນ.ເຊັ່ນ ປະເພດທີມກິລາມີ 6 ຄົນຂຶ້ນໄປນັກກິລາທີມຊາດລົງແຂ່ງຂັນໄດ້ບໍ່ເກີນ 2 ຄົນ, ປະເພດທີມ 5 ຄົນລົງມາ ລົງໄດ້ 1 ຄົນ, ສ່ວນປະເພດດ່ຽວ ບຸກຄົນບໍ່ອະນຸຍາດໃຫ້ທີມຊາດເຂົ້າຮ່ວມໄດ້;

5. ສຳລັບນັກກິລາທີ່ສັງກັດຈາກເມືອງໜຶ່ງ ໄປແຂ່ງຂັນກິລາໃຫ້ກັບເມືອງອື່ນຕ້ອງມີໜັງສືອະນຸຍາດຢ່າງຖືກຕ້ອງຂອງເມືອງ ທີ່ຕົນເອງອາໄສຢູ່.

ມາດຕາ 12 ລະບຽບການຈັດການແຂ່ງຂັນ

1. ການຈັດການແຂ່ງຂັນກິລາປະເພດຕ່າງໆ ໃຫ້ປະຕິບັດຕາມຂໍ້ກຳນົດ, ກົດລະບຽບ ຂອງຄະນະກຳມະການຈັດການແຂ່ງຂັນ ແລະ ລະບຽບ ກະຕິກາ ຂອງສະຫະພັນກິລາແຫ່ງຊາດ ວາງອອກ;

2. ການແຂ່ງຂັນກິລາທົ່ວແຂວງອານຸຍາດໃຫ້ນັກກິລາຜູ້ 1 ເຂົ້າຮ່ວມແຂ່ງຂັນໄດ້ 1 ປະເພດກິລາ; ຖ້າຫາກມີເງື່ອນໄຂ ສາມາດເຂົ້າຮ່ວມໄດ້ຫຼາຍລາຍການໃນປະເພດດຽວກັນ;

3. ການຈັດການແຂ່ງຂັນກິລາແຕ່ລະປະເພດຢ່າງໜ້ອຍບໍ່ໃຫ້ຫຼຸດ 3 ເມືອງ(ທີມ) ເຂົ້າຮ່ວມ;

4. ສິ່ງເອກະສານລາຍຊື່ຈຳນວນປະເພດກິລາ ທີ່ຕ້ອງການເຂົ້າຮ່ວມການແຂ່ງຂັນ ໃຫ້ກອງເລຂາ ຈຳນວນ 3 ສະບັບ ກ່ອນມື້ເປີດການແຂ່ງຂັນກິລາ ຢ່າງໜ້ອຍ 90 ວັນ.

ມາດຕາ 13 ປະເພດລາງວັນ

ລາງວັນທີ 1: ຫຼຽນຄຳ ພ້ອມໃບຍັ້ງຢືນ ແລະ ສັດນຳໂຊກ;

ລາງວັນທີ 2: ຫຼຽນເງິນ ພ້ອມໃບຍັ້ງຢືນ ແລະ ສັດນຳໂຊກ;

ລາງວັນທີ 3: ຫຼຽນທອງ ພ້ອມໃບຍັ້ງຢືນ ແລະ ສັດນຳໂຊກ;

- ສຳລັບລາງວັນທີ່ເປັນເງິນສົດ ແມ່ນມອບໃຫ້ແຕ່ລະເມືອງເປັນຜູ້ຮັບຜິດຊອບຕາມທ່າແຮງຂອງເມືອງ.
- ຜ່ານການສະຫຼຸບຜົນການແຂ່ງຂັນເມືອງທີ່ໄດ້ ຫຼຽນຄຳ ຈະໄດ້ຮັບລາງວັນເປັນເງິນສົດດັ່ງນີ້:

ອັນດັບທີ 1, 2 ແລະ 3 ແລະ ລາງວັນຊົມເຊີຍ, ອັນດັບທີ 4 -10 ຈະໄດ້ຮັບເງິນລາງວັນຕາມລຳດັບໂດຍອີງຕາມການຄົ້ນຄວ້າເຫັນດີຂອງຄະນະຮັບຜິດຊອບ.

ມາດຕາ 14 ງົບປະມານ

1. ນຳໃຊ້ງົບປະມານຂອງລັດ;

2. ການປະກອບສ່ວນຈາກສັງຄົມ, ບຸກຄົນ, ນິຕິບຸກຄົນ, ບໍລິສັດ, ນັກທຸລະກິດທາງພາຍໃນ ແລະ ຕ່າງປະເທດ;

3. ມອບໃຫ້ແຕ່ລະເມືອງປະກອບສ່ວນຕາມຄວາມເໝາະສົມໃຫ້ແກ່ ເມືອງທີ່ເປັນເຈົ້າພາບ.

## ໝວດທີ 3
## ຂໍ້ຫ້າມ

ມາດຕາ 15 ຂໍ້ຫ້າມທົ່ວໄປ

1. ນຳໃຊ້ການຫຼິ້ນ ແລະ ການແຂ່ງຂັນກິລາ ເພື່ອເປັນການພະນັນ;

2. ນຳໃຊ້ກິລາ ທີ່ແຕະຕ້ອງເຖິງຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ກໍ່ຄວາມເສຍຫາຍຕໍ່ກຽດສັກສີ, ສຸຂະພາບ, ຊີວິດ, ຊັບສິນຂອງຜູ້ອື່ນ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ;

3. ໃຊ້ອາລົມຮ້າຍດ່າ, ໃຊ້ຄວາມຍາບຊ້າ, ທ່າທີ ທີ່ບໍ່ເໝາະສົມ, ນາບຊູ່, ທຳຮ້າຍຮ່າງກາຍຜູ້ອື່ນ ເປັນຕົ້ນນັກກິລາ-ກາຍຍະກຳ ໃນເວລາສະແດງ ແລະ ແຂ່ງຂັນ;

4. ຂັດຂວາງນັກກິລາ ແລະ ບຸກຄະລາກອນກິລາ ເຂົ້າຮ່ວມຝຶກແອບ, ຝຶກຊ້ອມ, ສະແດງ ແລະ ແຂ່ງຂັນ;

5. ທຳລາຍພາຫະນະ, ວັດຖຸອຸປະກອນຕ່າງໆ;

6. ສ້າງອຸປະສັກ, ກີດຂວາງ ຫຼື ເມີນເສີຍຕໍ່ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ໃຫ້ ແລະ ຮັບສິນບົນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ລະບຽບການຈັດການແຂ່ງຂັນ.

**ມາດຕາ 16 ຂໍ້ຫ້າມສຳລັບນັກກິລາ**

1. ໃຊ້ສານຕ້ອງຫ້າມ, ພົວພັນສິ່ງເສບຕິດ, ສິ່ງລາມົກ ອະນາຈານໃນເວລາຝຶກແອບ, ຝຶກຊ້ອມ, ສະແດງ ແລະ ການແຂ່ງຂັນ;

2. ເຈຕະນາ ຫຼື ເມີນເສີຍ ເຮັດໃຫ້ເກີດການລົ້ມກິລາ;

3. ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ກຽດສັກສີ, ຊີວິດ, ຊັບສິນຂອງຄົນອື່ນໂດຍເຈຕະນາທີ່ບໍ່ຖືກ ຕ້ອງຕາມລະບຽບການ ແລະ ກະຕິກາ ການແຂ່ງຂັນ;

4. ຖືເອົາການແຂ່ງຂັນກິລາ ເປັນການພະນັນ;

5. ໃຫ້ ແລະ ຮັບສິນບົນ, ສໍ້ໂກງ, ຍັກຍອກວັດຖຸເງິນຄຳ ທີ່ຮັບໃຊ້ໃນການແຂ່ງຂັນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ລະບຽບ ແລະ ກະຕິກາການແຂ່ງຂັນ.

**ມາດຕາ 17 ຂໍ້ຫ້າມສຳລັບຄູຝຶກ, ກຳມະການຕັດສິນ, ພະນັກງານ-ລັດຖະກອນ ແລະ ບຸກຄະລາກອນ ກິລາ**

1. ສວຍໃຊ້ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ບຸກຄົນອື່ນ;

2. ປະຕິບັດສິດ, ໜ້າທີ່ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍ;

3. ປະໝາດ, ເມີນເສີຍ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່;

4. ກົດໜ່ວງ, ຖ່ວງດຶງ ເອກະສານກ່ຽວກັບການແຂ່ງຂັນ;

5. ຂໍເອົາ, ທວງເອົາ ຫຼື ຮັບເອົາສິນບົນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;

6. ເປີດເຜີຍຄວາມລັບກ່ຽວກັບການແຂ່ງຂັນ;

7. ສວຍໃຊ້ການແຂ່ງຂັນກິລາ ເປັນການພະນັນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບ ກົດໝາຍ.

## ໝວດທີ 4
## ອົງການຄຸ້ມຄອງ ແລະ ກວດກາ

**ມາດຕາ 18 ອົງການຄຸ້ມຄອງ ການແຂ່ງຂັນກິລາທົ່ວແຂວງ**

ຮອງປະທານຄະນະກຳມະການປົກຄອງແຂວງ ປະທານສະມາຄົມ ສະຫະພັນກິລາ-ກາຍຍະກຳແຂວງຄຸ້ມຄອງການຈັດການແຂ່ງຂັນກິລາທົ່ວແຂວງ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ ໂດຍມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ທີ່ເປັນເຈົ້າພາບ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງພະແນກສຶກສາທິການ ແລະ ກິລາແຂວງ**

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາກິລາທົ່ວແຂວງ;

2. ຄົ້ນຄວ້າ, ວາງແຜນການ, ແຜນພັດທະນາກິລາ ທົ່ວແຂວງ ເພື່ອສະເໜີຂັ້ນເທິງ ອະນຸມັດ;

3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີການຈັດການແຂ່ງຂັນ ເພື່ອໃຫ້ຂັ້ນເທິງພິຈາລະນາ;

4. ຮຽກໂຮມປະຊຸມ, ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ເພື່ອຊຸກຍູ້ການແຂ່ງຂັນ;

5. ຄຸ້ມຄອງ, ພັດທະນາ, ນຳໃຊ້ ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸອຸປະກອນ, ງົບປະມານຂອງການແຂ່ງຂັນກິລາ ໃຫ້ມີປະສິດທິຜົນ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຕໍ່ຂັ້ນເທິງ ເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 20 ສິດ ແລະ ໜ້າທີ່ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ລະບຽບ, ກົດໝາຍ ກ່ຽວກັບການຄຸ້ມຄອງ ການຈັດການແຂ່ງຂັນ;

2. ແຕ່ງຕັ້ງຄະນະຮັບຜິດຊອບໃນການຈັດການແຂ່ງຂັນ;

3. ຮຽກໂຮມ ແລະ ເຂົ້າຮ່ວມປະຊຸມ ກ່ຽວກັບການຈັດການແຂ່ງຂັນ ໃນເມືອງຂອງຕົນ;

4. ຄົ້ນຄວ້າ, ວາງແຜນ, ການຈັດການແຂ່ງຂັນກິລາ ເພື່ອສະເໜີຕໍ່ຂັ້ນເທິງຂອງຕົນອະນຸມັດ ແລ້ວຈັດຕັ້ງປະຕິບັດ;

5. ຄຸ້ມຄອງ, ພັດທະນາ, ນຳໃຊ້ພື້ນຖານໂຄງລ່າງ, ພາຫະນະ, ວັດຖຸອຸປະກອນ, ງົບປະມານຂອງການແຂ່ງຂັນໃຫ້ມີປະສິດທິຜົນ;

6. ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ເພື່ອການຈັດການແຂ່ງຂັນ;

7. ສະຫຼຸບ ລາຍງານການແຂ່ງຂັນ ໃຫ້ພະແນກສຶກສາທິການ ແລະ ກິລາ ແລະ ອົງການປົກຄອງເມືອງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍ.

### ມາດຕາ 21 ອົງການກວດກາ ການຈັດການແຂ່ງຂັນກິລາທົ່ວແຂວງ

1. ອົງການກວດກາພາຍໃນ ເຊິ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງ ວຽກງານການຈັດການແຂ່ງຂັນກິລາທົ່ວແຂວງໃນແຕ່ລະຄັ້ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກ ເຊິ່ງແມ່ນສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດແຕ່ລະຂັ້ນ.

### ມາດຕາ 22 ເນື້ອໃນການກວດກາ

1. ການປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການກ່ຽວກັບການຈັດການແຂ່ງຂັນ;

2. ການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ແລະ ບຸກຄະລາກອນ ຄະນະຮັບຜິດຊອບຈັດການແຂ່ງຂັນ;

3. ການແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງກ່ຽວກັບການແຂ່ງຂັນ.

### ມາດຕາ 23 ຮູບການກວດກາ

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 24 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການ ຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ;

ຖ້າມີກໍລະນີ ນັກກິລາ ທີ່ໄດ້ຮັບບາດເຈັບໃຫ້ການແຂ່ງຂັນ ແມ່ນຈະໄດ້ຮັບການຊ່ວຍເຫຼືອ ເບິ່ງແຍງປິ່ນປົວ ຕາມຄວາມເໝາະສົມ.

**ມາດຕາ 25 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີຕາມລະບຽບ ກົດໝາຍ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ການຈັດການແຂ່ງຂັນກິລາທົ່ວແຂວງ ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ຫ້ອງການສຶກສາທິການ ແລະ ກິລາເມືອງ ເຈົ້າພາບ ເປັນເສນາທິການຮັບຜິດຊອບໂດຍກົງໃຫ້ປະທານຄະນະກຳມະການປົກຄອງແຂວງ, ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ຈັດພິມລົງເຜີຍແຜ່ພາຍຫຼັງທາງລັດຖະການ 15 ວັນ.

ເຈົ້າແຂວງ

ແຂວງຄຳມ່ວນ
ເຈົ້າແຂວງ

ວັນໄຊ ພອງສະຫວັນ